ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**<u>ສຳນັກງານນາຍົກລັດຖະມົນຕີ</u>** ເລກທີ 150 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 18.05.2007.

# ດຳລັດ
# ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002;
- ອີງຕາມການສະເໜີ ຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 74/ທຫລ, ລົງວັນທີ 26 ມີນາ 2007.

ໃນໄລຍະຜ່ານມາ ຢູ່ປະເທດພວກເຮົາໄດ້ມີການນຳໃຊ້ເງິນຕາຕ່າງປະເທດ ຢ່າງຊະຊາຍ ການແຈ້ງລາຄາສິນຄ້າ ແລະ ຄ່າບໍລິການ, ການຮັບຊຳລະ, ການລົງໂຄສະນາຂາຍສິນຄ້າເປັນເງິນ ຕາຕ່າງປະເທດຢ່າງແຜ່ຫຼາຍ ຊຶ່ງເປັນອຸປະສັກໃນການຈັດຕັ້ງປະຕິບັດນະໂຍບາຍເງິນຕາແຫ່ງຊາດ ອັນເປັນການລະເມີດລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002 ຢ່າງຮ້າຍແຮງ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

**ມາດຕາ 1: ຈຸດປະສົງ.**

ເພື່ອເຮັດໃຫ້ເນື້ອໃນຈິດໃຈ ຂອງລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຊຶ່ງເປັນກົດໝາຍທີ່ມີຄວາມສຳຄັນ ຕໍ່ການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ ແລະ ເສດຖະກິດຂອງປະເທດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ແລະ ມີຄວາມສັກສິດ ທັງເປັນການເຊີດຊູນ້ຳໃຈຮັກຊາດ ແລະ ຄວາມເປັນເອກະລາດ ເປັນເຈົ້າຕົນເອງທາງດ້ານເສດຖະກິດ, ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ ແລະ ຍົກສູງຄຸນຄ່າເງິນຕາຂອງຊາດ, ຢຸດຕິການນຳໃຊ້ເງິນຕາຕ່າງປະເທດ ຢ່າງຊະຊາຍ ຢູ່ໃນປະເທດພວກເຮົາ.

ມາດຕາ 2: ການຈັດຕັ້ງປະຕິບັດ.

2.1. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ເຈົ້າຄອງນະຄອນຫລວງ ແລະ ເຈົ້າແຂວງໃນທົ່ວປະເທດ ເພີ່ມທະວີການໂຄສະນາເຜີຍແຜ່ ການສຶກສາອົບຮົມກ່ຽວກັບລະບຽບການຄຸ້ມຄອງເງິນຕາຕ່າງປະເທດເພື່ອເຮັດໃຫ້ສັງຄົມຮັບຮູ້ ແລະ ເຫັນໄດ້ຄວາມສຳຄັນ ໃນການປົກປ້ອງຮັກສາ ແລະ ຍົກສູງຄຸນຄ່າຂອງເງິນກີບ, ຄຸ້ມຄອງເງິນຕາຕ່າງປະເທດ, ຈຳກັດ ແລະ ກ້າວໄປເຖິງຢຸດຕິການນຳໃຊ້ເງິນຕາຕ່າງປະເທດ ຢ່າງຊະຊາຍ ໃນ ສປປ ລາວ.

2.2. ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫລວງ, ເຈົ້າແຂວງ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ ໃນທົ່ວປະເທດ ປະຕິບັດການເກັບພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆຂອງລັດ ເປັນເງິນກີບ ແລະ ຊຳລະເປັນເງິນກີບເທົ່ານັ້ນ ເວັ້ນເສຍແຕ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍ ຫລືໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ເກັບ ແລະ ຊຳລະເປັນເງິນຕາຕ່າງປະເທດ. ທັງນີ້ ກໍ່ເພື່ອໃຫ້ສອດຄ່ອງກັບກັບ ມາດຕາ 78 ຂອງກົດໝາຍວ່າດ້ວຍຊ່ວຍສາອາກອນ.

2.3. ໃຫ້ບັນດາວິສາຫະກິດ, ບັນດາຫ້າງຮ້ານ ທັງພາກລັດ ແລະ ເອກະຊົນ ປະກາດ ແລະ ຕິດລາຄາສິນຄ້າ ແລະ ຄ່າບໍລິການ ເປັນເງິນກີບ.

2.4. ໃຫ້ບັນດາທະນາຄານທຸລະກິດ, ຂະຫຍາຍໜ່ວຍແລກປ່ຽນເງິນຕາ, ຊຸກຍູ້ສົ່ງເສີມການສ້າງຕັ້ງຮ້ານແລກປ່ຽນຮຸ້ນສ່ວນ ແລະ ຮ້ານແລກປ່ຽນເອກະຊົນ ໃຫ້ກວ້າງຂວາງ ໃນຂອບເຂດທົ່ວປະເທດ ເພື່ອອຳນວຍຄວາມສະດວກ ໃນການແລກປ່ຽນເງິນຕາຂອງສັງຄົມ.

2.5. ໃຫ້ທະນາຄານ ແຫ່ງ ສປປ ລາວ ຄົ້ນຄວ້າອອກລະບຽບການຄຸ້ມຄອງການແລກປ່ຽນເງິນຕາຂອງໜ່ວຍແລກປ່ຽນເງິນຕາ ເພື່ອໃຫ້ໜ່ວຍແລກປ່ຽນເງິນຕາ ສາມາດໃຫ້ບໍລິການໄດ້ທັງການຊື້ ແລະການຂາຍເງິນຕາ ໃຫ້ສັງຄົມໃນລະດັບທີ່ເໝາະສົມ.

2.6. ໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ຄົ້ນຄວ້າບັນດາບັນຫາທີ່ເຫັນວ່າເປັນອຸປະສັກ, ສ້າງຄວາມລຳຄານແກ່ການຊຳລະສະສາງເປັນເງິນກີບ ເພື່ອກຳນົດມາດຕະການແກ້ໄຂ ໃນແຕ່ລະໄລຍະ ແລ້ວນຳສະເໜີລັດຖະບານ ເພື່ອຂໍທິດຊີ້ນຳ.

ມາດຕາ 3: ມາດຕະການຕໍ່ຜູ້ກະທຳຜິດ.

ໃນກໍລະນີ ມີການລະເມີດດຳລັດສະບັບນີ້ ມອບໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນເຈົ້າການປະຕິບັດມາດຕະການຕ່າງໆ ຕາມກໍລະນີເບົາຫລືໜັກ ຊຶ່ງກຳນົດໄວ້ໃນລັດຖະບັນຍັດ 01/ສປປ, ລົງວັນທີ 09 ສິງຫາ 2002 ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

ມາດຕາ 4: ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າອ້ອມຂ້າງສູນກາງ, ເຈົ້າຄອງນະຄອນຫລວງ, ບັນດາທ່ານເຈົ້າແຂວງໃນທົ່ວປະເທດ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 5: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ